**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
ກອງທຶນປົກປັກຮັກສາສິ່ງແວດລ້ອມ
ໂຄງການສິ່ງແວດລ້ອມ ແລະ ສັງຄົມ ໄລຍະ 2

## *ສັນຍາຈັດຕັ້ງປະຕິບັດໂຄງການ*

- ອີງຕາມຈຸດປະສົງຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ແລະ ໂດຍສະເພາະໂຄງການ ສິ່ງແວດລ້ອມ ແລະ ສັງຄົມໄລຍະໄລຍະທີ່ 2 (ຄສລ2) ທີ່ໄດ້ຮັບເງິນສະໜັບສະໜູນຈາກທະນາຄານ ໂລກ ແລະ
- ອີງຕາມໃບສະເໜີຂອງ ***ກົມແຜນການ ແລະ ການຮ່ວມມື (ກຊສ) ເລກທີ 0138/ກຊສ.ກຜຮ ລົງວັນທີ 10/03/2016***

ກປສ ໃນນາມອົງການສະໜອງທຶນ, ຫ້ອງການຢູ່ຕຶກ 100, ຖະໜົນສີດຳດວນ, ນະຄອນຫຼວງວຽງຈັນ, ສປປລາວ, ໂທລ: (021) 251947, ແຟັກ: (021) 251946 (ຕໍ່ໄປເອີ້ນວ່າອົງການສະໜອງທຶນ)

***ກົມແຜນການ ແລະ ການຮ່ວມມື (ກຊສ)***, ມີຈຸດປະສົງໃນສັນຍາສະບັບນີ້ ຊຶ່ງຕໍ່ໄປເອີ້ນວ່າ "ອົງການຮັບຜິດ ຊອບໂຄງການຍ່ອຍ" ຫ້ອງການຕັ້ງຢູ່ ດົງນາໂຊກ-ໜອງບຶກ, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ຕຶກ ກະຊວງ ຊັບພະຍາກອນທຳມະຊາດ ແ ລະ ສິ່ງແວດລ້ອມ ຊັ້ນ ສາມ, ໂທ/ແຟກ: +856 21 250 643; ອີເມວ: dpc@monre.gov.la

## ໄດ້ຕົກລົງເຫັນດີນຳກັນດັ່ງນີ້:

***ມາດຕາ 1: ການຈັດຕັ້ງປະຕິບັດໂຄງການຍ່ອຍ:***

1.1. ຜູ້ຮັບທຶນຈະຕ້ອງໄດ້ປະຕິບັດກິດຈະກຳຕ່າງໆທີ່ໄດ້ຕົກລົງເຫັນດີນຳກັນ (ອີງຕາມການສະເໜີຂອງໂຄງການ ຍ່ອຍ) ຄືຢູ່ໃນບົດສະເໜີໂຄງການຍ່ອຍໄດ້ຕິດຄັດ ກັບເອກະສານສັນຍາສະບັບນີ້.

- ເລກທີໂຄງການຍ່ອຍ: ***PICE-PAW005***
- ຊື່ໂຄງການຍ່ອຍ: ***ໂຄງການສ້າງຄວາມເຂັ້ມແຂງ ໃຫ້ ກົມແຜນການ ແລະ ການຮ່ວມມື, ກຊສ ໃນ ການວາງແຜນ ແລະ ປະສານງານ ໃນຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ***
- ທີ່ຢູ່ຂອງໂຄງການຍ່ອຍ: ***ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກຳແພງນະຄອນວຽງ ຈັນ.***
- ມູນຄ່າໂຄງການຍ່ອຍ: ***4,033,800,000 ກີບ ທຽບເທົ່າ 498,000 ໂດລາສະຫະລັດ (ສີ່ຕື້ ສາມສິບ ສາມລ້ານ ແປດແສນ ກີບ ຖ້ວນ) ທຽບເທົ່າ 498,000.00 ໂດລາສະຫະລັດ (ສີ່ແສນ ເກົ້າສິບແປດພັນ***

*ໂດລາສະຫະລັດ ຖ້ວນ), ລວມເງິນແຮ 10%, ແຕ່ບໍ່ລວມເງິນປະກອບສ່ວນຂອງຄູ່ຮ່ວມງານ.* ອັດຕາແລກປ່ຽນ 8,100 ກີບ ຕໍ່ 1 ໂດລາສະຫະລັດ.

***ມາດຕາ 2: ສິດແລະໜ້າທີ່ຂອງແຕ່ລະຝ່າຍ***

**ກ. ອົງການຮັບຜິດຊອບໂຄງການຍ່ອຍ**

2.1. ມີໜ້າທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດ, ຕິດຕາມກວດກາແລະຄຸ້ມຄອງໂຄງການຍ່ອຍ ຕາມທີ່ລະບຸໃນບົດສະເໜີໂຄງການຍ່ອຍ, ຕາຕະລາງຈັດຕັ້ງປະຕິບັດແລະມູນຄ່າ ທີ່ໄດ້ລະບຸໄວ້ໃນສັນຍາສະບັບນີ້ ແລະ ບັນດາ ເອກະສານຄັດຕິດຕ່າງໆ; ໂດຍສະເພາະແລ້ວ, ອົງການຈັດຕັ້ງປະຕິບັດໂຄງການຍ່ອຍ ຈະຮັບຮອງ, ເຮັດໃຫ້ມີຜົນສັກສິດ ຕະຫຼອດໄລຍະຈັດຕັ້ງປະຕິບັດໂຄງການຍ່ອຍ ຈະຈັດຕັ້ງແຜນວຽກແລະແຜນງົບປະມານປີ, ແຜນຈັດຊື້ຈັດຈ້າງແລະແຜນຕິດຕາມກວດກາ (ອີງຕາມແຜນວຽກແລະງົບປະມານປີ) ໃຫ້ເປັນທີ່ພໍໃຈຂອງອົງການສະໜອງທຶນ.

2.2. ຈະປະຕິບັດ ຕາມລະບຽບກົດໝາຍລັດຖະບານ ສປປລາວ ໂດຍສະເພາະດຳລັດປະເມີນຜົນກະທົບດ້ານສິ່ງແວດລ້ອມແລະສັງຄົມ ໃນບັນຫາທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດກິດຈະ ກຳຂອງໂຄງການຍ່ອຍ.

2.3. ຈະປະຕິບັດຕາມ "ບົດ/ຂໍ້ແນະນຳ" ທີ່ມີໃນນະໂຍບາຍປ້ອງກັນສິ່ງແວດລ້ອມແລະສັງຄົມຂອງ ຄປສ ແລະ ຄູ່ມືຈັດຕັ້ງປະຕິບັດໂຄງການ, ເອກະສານເຫຼົ່ານີ້ອາດມີການ ປັບປຸງເປັນແຕ່ລະໄລຍະ. ໃນກໍລະນີທີ່ໂຄງການຍ່ອຍ ທີ່ມີການພົວພັນກັບການເວັນຄືນທີ່ດິນ, ການຈຳກັດການເຂົ້າຫາຊັບພະຍາກອນ, ຊົນເຜົ່າ ຫຼື ວຽກກໍ່ສ້າງຂະໜາດນ້ອຍ, ຈະໄດ້ປະຕິບັດຕາມກອບນະໂຍບາຍຍົກຍ້າຍຈັດສັນປະຊາຊົນ, ກອບການມີສ່ວນຮ່ວມຂອງຊຸມຊົນ ແລະ ການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ຊຶ່ງໄດ້ກຳນົດໃນຄູ່ມືດັ່ງກ່າວນີ້ແລ້ວ.

2.4. ຈະຮັກສາລະບົບການຄຸ້ມຄອງການເງິນ ຕາມມາດຕາຖານ ແລະ ເງື່ອນຂອງທະນາຄານໂລກ ທີ່ໄດ້ກຳນົດໄວ້ໃນຂໍ້ 2.07 ໂດຍສະເພາະການຄຸ້ມຄອງການເງິນ, ການຈັດຊື້ຈັດຈ້າງ ແລະ ການລາຍງານ ສິ່ງເຫຼົ່ານີ້ແມ່ນໄດ້ກຳນົດໄວ້ໃນປຶ້ມຄູ່ມືຈັດຕັ້ງປະຕິບັດໂຄງການຍ່ອຍ ລວມທັງຄູ່ມືອື່ນໆທີ່ກ່ຽວຂ້ອງ. ອັນນີ້ລວມເອົາການປະຕິບັດຕາມນະໂຍບາຍແລະລະບຽບຂອງ ກປສ ກ່ຽວກັບການນຳໃຊ້ລົດທີ່ເຊົ່າ ຫຼື ຊື້ມາເພື່ອຈັດຕັ້ງປະຕິບັດກິດຈະກຳໂຄງການຍ່ອຍ.

2.5. ຈະສົ່ງພະນັກງານໂຄງການຍ່ອຍ ທີ່ຮັບຜິດຊອບການຄຸ້ມຄອງບໍລິຫານໂຄງການຍ່ອຍ (ພະນັກງານທີ່ພົວພັນກັບການຄຸ້ມຄອງໂຄງການແລະການລາຍງານກິດຈະກຳ, ພະນັກງານການເງິນ, ພະນັກງານຈັດຊື້ຈັດຈ້າງ ແລະ ພະນັກງານຮັບຜິດຊອບກ່ຽວກັບນະໂຍບາຍການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ) ເຂົ້າຮ່ວມການຝຶກອົບຮົມ ທີ່ກ່ຽວຂ້ອງຈັດໂດຍ ອົງການສະໜອງທຶນ.

2.6. ຈະເອົາໃຈໃສ່ແລະປະຕິບັດເນື້ອໃນຂອງກົດໝາຍຕ່າງໆ, ລະບຽບແລະຫຼັກການຂອງລັດຖະບານ ແຫ່ງ ສປປລາວ ທີ່ອາດໃຊ້ໄດ້ກັບໂຄງການຍ່ອຍ ເປັນຕົ້ນຄວາມປອດໄພ ແລະ ຄວາມສະຫງົບສຸກໃນການດຳເນີນການຈັດຕັ້ງໂຄງການຍ່ອຍຢູ່ພາກສະໜາມ, ວິທີການກໍ່ສ້າງ, ລະບຽບການຈາລະຈອນ, ການປົກປັກຮັກສາ ສິ່ງແວດລ້ອມ ແລະສັງຄົມ.

2.7. ຈະຮັບຜິດຊອບທຸກໆອຸປະຕິເຫດທີ່ເກີດຈາກວຽກ, ຜູ້ບາດເຈັບ, ຜູ້ຖືກກະທົບ, ຜູ້ເສຍ ຫາຍທີ່ເກີດມາຈາກການຈັດຕັ້ງປະຕິບັດໂຄງການຍ່ອຍ.

2.8. ຈະບໍ່ເຮັດສັນຍາຕໍ່ ຫຼື ມອບວຽກໃດໜຶ່ງໃຫ້ຜູ້ອື່ນດຳເນີນ ຖ້າບໍ່ໄດ້ຮັບການເຫັນດີຈາກອົງການສະໜອງທຶນກ່ອນ.

2.9. ຈະໃຫ້ການຮ່ວມມືຢ່າງເຕັມທີ່ກັບອົງການສະໜອງທຶນ, ລັດຖະບານລາວ ແລະ ທະນາຄານໂລກໃນການຊີ້ນຳລວມ ທັງວຽກ ຕິດຕາມກວດກາ ແລະ ປະເມີນຜົນ.

2.10. ຈະສະໜອງເອກະສານອັນຈຳເປັນ ແລະ ໃຫ້ການຮ່ວມມືໃນວຽກບໍລິຫານຕ່າງໆ ເພື່ອຮັບປະກັນໃຫ້ມີການທົບທວນນຳກັນລະຫວ່າງອົງການສະໜອງທຶນແລະອົງການຈັດຕັ້ງປະຕິບັດ (ຜູ້ຮັບທຶນ), ຕາມການສະເໜີຂອງໂຄງການຍ່ອຍ, ລັດຖະບານ ສປປລາວ ແລະ ທະນາຄານໂລກ ຢ່າງໜ້ອຍທຸກໆ 6 ເດືອນ. ອົງການຈັດຕັ້ງປະຕິບັດ ເຫັນດີວ່າ ຖ້າຫາກອົງການສະໜອງທຶນ ສະຫຼຸບຈາກການທົບທວນດັ່ງກ່າວວ່າໂຄງການບໍ່ມີຜົນງານເປັນທີ່ພໍໃຈ ແລະ ຄວນເອົາທຶນສ່ວນໜຶ່ງຫຼືທັງໝົດຂອງໂຄງການຍ່ອຍດັ່ງກ່າວນັ້ນຄືນ ຕາມສັນຍາສະບັບນີ້, ໄປໃຫ້ອົງການຈັດຕັ້ງປະຕິບັດໂຄງການຍ່ອຍອື່ນ, ຈະໃຫ້ການຮ່ວມມືເປັນຢ່າງດີໃນການໂອນເງິນ, ສິ່ງຂໍ້ມູນຂ່າວສານແລະຊັບສິນ, ຕາມທີ່ອົງການສະໜອງທຶນສະເໜີມາ.

2.11. ຈະຮັບຜິດຊອບ ແລະ ຮັບປະກັນໃຫ້ໂຄງການຍ່ອຍ ບັນລຸຕາມຈຸດປະສົງ ແລະ ຈະສ້າງເອກະສານກ່ຽວກັບຜົນສຳເລັດ (ຫຼືອັນທີ່ບໍ່ສຳເລັດ) ຕາມຈຸດປະສົງ ແລະ ເປົ້າໝາຍທີ່ຄາດວ່າຈະໄດ້ຮັບຕາມວິທີ ແລະ ແບບທີ່ໄດ້ລະບຸໄວ້ຢູ່ໃນຄູ່ມືການຈັດຕັ້ງປະຕິບັດໂຄງ ການຍ່ອຍ.

2.12. ຈະເຮັດບົດລາຍງານການເງິນ ແລະ ຈັດຊື້ຈັດຈ້າງເປັນໄລຍະ (ໄຕມາດ ແລະ ບົດສະຫຼຸບໂຄງການຍ່ອຍ) ໃຫ້ກັບຜູ້ສະໜອງທຶນຕາມແບບຟອມ ແລະ ວິທີທີ່ກຳນົດໃນຄູ່ມືຈັດຕັ້ງປະຕິບັດໂຄງການຍ່ອຍ. ສຳລັບບົດລາຍງານປະຈຳໄຕມາດ ແລະ ບົດສະຫຼຸບໂຄງການຍ່ອຍ ຈະໄດ້ເຮັດໃຫ້ແລ້ວ ພາຍໃນ 30 ວັນຫຼັງຈາກຈົບໄຕມາດ ແລະ ເຮັດບົດສະຫຼຸບໂຄງການຍ່ອຍ ພາຍຫຼັງມື້ຈົບໂຄງການ.

2.13. ຈະເຮັດບົດລາຍງານກ່ຽວກັບຄວາມຄືບໜ້າຂອງໂຄງການຍ່ອຍ ເປັນແຕ່ລະໄລຍະ (ເຄິ່ງປີ, ປະຈຳປີ ແລະ ສະຫຼຸບໂຄງການຍ່ອຍ) ໃຫ້ອົງການສະໜອງທຶນຕາມແບບແລະວິທີທີ່ກຳນົດໃນຄູ່ມືຈັດຕັ້ງປະຕິບັດໂຄງການຍ່ອຍ. ບົດລາຍງານເຄິ່ງປີ, ປະຈຳປີ ແລະ ບົດສະຫລຸບປິດໂຄງການຍ່ອຍ ຈະຕ້ອງໄດ້ເຮັດແລ້ວພາຍໃນ 30 ວັນ. ບົດລາຍງານນັ້ນຄວນກວມເອົາ ຜົນງານ ຂອງໂຄງການຍ່ອຍທັງໝົດ ແລະ ສຳລັບການເງິນແລະການຈັດຊື້ຈັດຈ້າງ ອາດເຮັດເປັນເອກະສານຄັດຕິດໃຫ້ອົງການໃຫ້ທຶນເພື່ອສະດວກໃນການປະເມີນ ແລະ ຕັດສິນໃຈວ່າຈະໃຫ້ທຶນຕໍ່ຫຼືບໍ່ໃນໄລຍະຕໍ່ໄປ.

2.14. ຈະເປີດບັນຊີທະນາຄານສະເພາະໂຄງການໂດຍໃສ່ຊື່ໂຄງການຍ່ອຍແລະຈະມອບໝາຍໃຫ້ ພະນັກງານ ຂອງໂຄງການຍ່ອຍຢ່າງໜ້ອຍ 2 ຄົນ ມີສິດລົງນາມເພື່ອໂອນ ຫລື ຖອນເງິນ. ນອກຈາກນີ້, ຜູ້ໄດ້ຮັບທຶນຈະຮັບປະກັນວ່າ ໄດ້ເຮັດຕາມກົນໄກທະນາຄານ, ຕ້ອງໃຫ້ມີສອງລາຍເຊັນ ເພື່ອຖອນ, ໂອນ, ຈ່າຍເງິນ ແລະຂໍປ່ຽນລາຍເຊັນສຳລັບບັນຊີນັ້ນ. ນອກນີ້ ຈະໄດ້ສົ່ງສຳເນົາຊື່ບັນຊີທະນາຄານ, ເລກທີຂອງບັນຊີ ແລະ ເອກະສານທະນາຄານທີ່ ຢັ້ງຢືນວ່າຢ່າງຫນ້ອຍມີສອງລາຍເຊັນໃຫ້ອົງການສະໜອງທຶນໃນໄລຍະ 2 ອາທິດຫຼັງຈາກໄດ້ເຊັນສັນຍາ.

2.15. ປະກອບຄຳເຫັນທັນກັບເວລາໃຫ້ແກ່ອົງການສະໜອງທຶນ ເພື່ອກະກຽມບົດລາຍງານທີ່ອົງ ການສະໜອງທຶນສົ່ງມາ, ຕາມທີ່ ໂຄງການຍ່ອຍຕ້ອງການ.

2.16. ຈະຈັດຕັ້ງປະຕິບັດໂຄງການຢ່າງເອົາໃຈໃສ່ ແລະ ມີປະສິດທິພາບ ແລະ ຖືກຕາມແຜນວຽກ ແລະ ງົບປະມານປະຈຳປີ ແລະ ຕາມມາດຕະຖານແລະວິທີການທາງດ້ານເຕັກນິກ, ເສດຖະກິດ, ການເງິນ, ຄຸ້ມຄອງ, ສິ່ງແວດລ້ອມແລະສັງຄົມ ໃຫ້ເປັນທີ່ພໍໃຈຂອງອົງການສະໜອງທຶນ ຕາມທີ່ວາງໄວ້ໃນຄູ່ມືຈັດຕັ້ງປະຕິບັດໂຄງການ;

2.17. ຈະບໍ່ນຳໃຊ້ທຶນຮອບຕາມສັນຍາໂຄງການຍ່ອຍສະເໜີນີ້ເປັນຄ່າໃຊ້ຈ່າຍທີ່ບໍ່ມີສິດ ແລະຈຸດປະສົງທີ່ບໍ່ຖືກຕ້ອງ ຕາມສັນຍາສະບັບນີ້ ແລະຕາມເນື້ອໃນຂອງບົດແນະນຳຂອງທະນາຄານໂລກ ກ່ຽວກັບການປ້ອງກັນແລະຕ້ານ ການສໍ້ລາດບັງຫຼວງໃນໂຄງການທີ່ໄດ້ເງິນກູ້ຢືມ, ສິນເຊື່ອແລະທຶນຊ່ວຍເຫຼືອລ້າຈາກທະນາຄານໂລກ, ລົງວັນ ທີ 15/10/2006 ແລະ ໄດ້ທົບທວນຄືນໃນເດືອນມັງກອນ 2011.

2.18. ຈະບໍ່ດັດແກ້, ໄຈະ, ປ່ຽນແປງ, ອຸທອນຫຼືປະຕິເສດເນື້ອໃນຂອງແຜນວຽກປະຈຳປີ, ແຜນຕິດຕາມກວດກາ, ແຜນງົບປະມານແລະຈັດຊື້ຈັດຈ້າງ ຖ້າບໍ່ໄດ້ຮັບການເຫັນດີຈາກ ອົງການໃຫ້ທຶນ;

2.19. ຈະຊ່ວຍອົງການສະໜອງທຶນ, ລັດຖະບານ ແລະ ທະນາຄານໂລກ ເພື່ອມາກວດກາໂຄງການຍ່ອຍ, ການ ເຄື່ອນໄຫວຂອງມັນ, ບົດບັນທຶກ ແລະ ເອກະສານຕ່າງໆ;

2.20. ຈະແຈ້ງອົງການສະໜອງທຶນຢ່າງທັນການກ່ຽວກັບເງື່ອນໄຂ ທີ່ເປັນອຸປະສັກຫຼືເຮັດໃຫ້ມີອຸປະສັກຕໍ່ການຈັດ ຕັ້ງປະຕິບັດໂຄງການຍ່ອຍແລະຜົນສຳເລັດຂອງມັນ;

2.21. ຈະພະຍາຍາມເພື່ອ:

a. ຮັບປະກັນວ່າການຈັດຊື້ວັດຖຸສິ່ງຂອງ (ສິນຄ້າ), ວຽກກໍ່ສ້າງ ແລະ ການບໍລິການຕ່າງໆທີ່ໄດ້ນຳໃຊ້ ທຶນທີ່ໄດ້ຮັບຈາກອົງການຜູ້ສະໜອງທຶນຕ້ອງໃຫ້ມັນສອດຄ່ອງກັບບົດແນະນຳການຈັດຊື້-ຈັດຈ້າງ ຂອງທະນາຄານໂລກ ແລະ ໄດ້ລະບຸລະອຽດໄວ້ໃນປື້ມຄູ່ມືການຈັດຕັ້ງປະຕິບັດໂຄງການ;

b. ຮັກສາລະບົບບໍລິຫານການເງິນ, ການກະກຽມບົດລາຍງານການເງິນໃຫ້ສອດຄ່ອງກັບ ມາດຖານ ການເຮັດບັນຊີທີ່ຜູ້ສະໜອງທຶນ, ລັດຖະບານ ແລະ ທະນາຄານໂລກຮັບໄດ້, ແລະ ເອກະສານຕ່າງ ຄວນໃຫ້ຄົບຖ້ວນ ສາມາດກວດສອບໄດ້ ແລະ ສະແດງໃຫ້ເຫັນເຖິງການເຮັດວຽກ, ການໃຊ້ ຊັບພະຍາກອນ, ລາຍຈ່າຍຕ່າງໆທີ່ກ່ຽວຂ້ອງກັບໂຄງການຍ່ອຍ.

c. ສົ່ງເອກະສານຕົ້ນສະບັບທັງໝົດໃຫ້ ຄອົງການໃຫ້ທຶນ (ສັນຍາ, ໃບສັ່ງຊື້, ໃບສະເໜີລາຄາ, ໃບ ບິນ, ໃບຮັບເງິນແລະເອກະສານອື່ນໆ) ເພື່ອຢັ້ງຢືນການໃຊ້ຈ່າຍຂອງໂຄງ ການຍ່ອຍ.

d. ເກັບຮັກສາສຳເນົາເອກະສານຕ່າງໆ (ສັນຍາ, ໃບສັ່ງຊື້, ໃບສະເໜີລາຄາ, ໃບບິນ, ໃບຮັບເງິນແລະ ເອກະສານອື່ນໆ) ເພື່ອຢັ້ງຢືນການໃຊ້ຈ່າຍຂອງໂຄງການຢ່າງໜ້ອຍ ຮອດວັນທີ 30/6/2023 ຫຼື ວັນທີ່ອົງການສະໜອງທຶນ ຈະແຈ້ງໃຫ້ຕື່ມ;

e. ໃຫ້ຜູ້ຕາງໜ້າຂອງລັດຖະບານ ແລະ ທະນາຄານໂລກ ສາມາດມາກວດເບິ່ງເອກະສານດັ່ງກ່າວໄດ້;

f. ອຳນວຍຄວາມສະດວກໃນການເຂົ້າເຖິງບົດລາຍງານທາງດ້ານການເງິນ ແລະ ຂໍ້ມູນທັງໝົດໃນ ການຈັດຕັ້ງປະຕິບັດໂຄງການຍ່ອຍໃຫ້ແກ່ຜູ້ມາກວດສອບໂຄງການອິດສະຫລະຕາມທີ່ຜູ້ສະໜອງ ທຶນໄດ້ຈັດຫາມາໃຫ້, ໃນແຕ່ລະສົກປີງົບປະມານ ໂດຍສອດຄ່ອງກັບມາດຕະຖານການກວດສອບ ຂອງລັດຖະບານ ແລະ ທະນາຄານໂລກ, ໂດຍຜູ້ມາກວດສອບຕ້ອງເປັນທີ່ຍອມຮັບຈາກລັດຖະບານ ແລະ ທະນາຄານໂລກ.

g. ກະກຽມແລະສະໜອງໃຫ້ຜູ້ກວດສອບໂຄງການອິດສະຫລະ ແລະ ອົງການສະໜອງທຶນ ຂ່າວສານ ເຫຼົ່ານີ້ ເຊັ່ນບົດລາຍງານ ການເງິນ, ສະພາບການເງິນແລະບັນຊີ ລວມທັງບົດກວດສອບໂຄງການ ຕາມທີ່ ອົງການສະໜອງທຶນ, ລັດຖະບານ ແລະ ທະນາຄານໂລກຂໍມາຢ່າງສົມເຫດສົມຜົນ.

h. ຮັກສານະໂຍບາຍແລະລະບຽບທີ່ເໝາະສົມ ເພື່ອສາມາດຕິດຕາມກວດກາແລະຕີລາຄາ ຕາມ ພື້ນຖານທີ່ເຄີຍເຮັດມາ ໂດຍອີງໃສ່ຕົວຊີ້ວັດທີ່ໄດ້ກຳນົດໃນບົດສະເໜີໂຄງການຍ່ອຍ ໃນການຈັດຕັ້ງ ປະຕິບັດໂຄງການຍ່ອຍແລະບັນລຸໃຫ້ໄດ້ຈຸດປະສົງຂອງມັນ;

i. ສະໜອງຂໍ້ມູນຕ່າງໆໃຫ້ຜູ້ສະໜອງທຶນ, ລັດຖະບານ ແລະ ທະນາຄານໂລກກ່ຽວກັບການຈັດຕັ້ງ ປະຕິບັດໂຄງການ ແລະ ຂັ້ນຕອນຕ່າງໆທີ່ທາງໂຄງການໄດ້ນຳໃຊ້ໃນຊ່ວງຈັດຕັ້ງປະຕິບັດໂຄງການ.

j. ສົ່ງຄືນໃຫ້ອົງການສະໜອງທຶນທັນທີ ທຶນຂອງໂຄງການຍ່ອຍທີ່ບໍ່ທັນໄດ້ໃຊ້ໃນການຈັດຕັ້ງປະຕິບັດໂຄງການ ຫຼື ເພື່ອບັນລຸຈຸດປະສົງຂອງໂຄງການຍ່ອຍ ຫຼື ບັນລຸຈຸດປະສົງ ບໍ່ດັ່ງນັ້ນກໍ່ ນໍາໃຊ້ທຶນທີ່ບໍ່ໄດ້ປະຕິບັດຕາມເນື້ອໃນຂອງສັນຍາ ສະບັບນີ້;

k. ເຫັນດີໃຫ້ອົງການສະໜອງທຶນ ໃຊ້ສິດໂຈະຫຼືຢຸດຕິສິດຂອງອົງການຈັດຕັ້ງປະຕິບັດ ເພື່ອນໍາໃຊ້ທຶນທີ່ກໍານົດໃນສັນຍາໂຄງການຍ່ອຍຂອງອົງການ ເມື່ອເຫັນວ່າອົງການນີ້ ເຮັດບໍ່ໄດ້ຕາມພັນທະໃນສັນຍາດັ່ງກ່າວ.

2.22. ຈະພະຍາຍາມສະໜອງບຸກຄະລາກອນຕ່າງໆໃຫ້ໂຄງການຍ່ອຍຕາມຄວາມເໝາະສົມເພື່ອບັນລຸຈຸດ ປະສົງຂອງໂຄງການຍ່ອຍ.

**ຂ). ອົງການສະໜອງທຶນ**

2.23 ຈະຮັບຜິດຊອບ ສະໜອງທຶນຕາມສັນຍາໃຫ້ແກ່ອົງການຈັດຕັ້ງປະຕິບັດ ເພື່ອເຮັດວຽກຂອງໂຄງການຍ່ອຍໃຫ້ສໍາເລັດຕາມທີ່ໄດ້ວາງແຜນໄວ້. ອົງການສະໜອງທຶນ ຍັງຈະຮັບ ຜິດຊອບໃນການຕິດຕາມກວດກາ ແລະຮັບປະກັນຄຸນນະພາບທາງດ້ານວິຊາການ ແລະ ເຕັກນິກ ສໍາລັບວຽກທີ່ຈະເຮັດອອກມາ. ຍິ່ງໄປກວ່ານັ້ນ, ອົງການສະໜອງທຶນ ມີໜ້າທີ່ຮັບຊອບໃນການຕັກລົງຢຸດຕິຊົ່ວຄາວ ຫຼື ຍົກເລີກສັນຍາໂຄງການຍ່ອຍ ແລະ ຕິດຕາມເອົາທຶນທີ່ໂຄງການຍ່ອຍຄວນໃຊ້ແທນຄືນ ຕາມເນື້ອໃນທີ່ໄດ້ລະບຸໄວ້ໃນສັນຍາສະບັບນີ້.

2.24 ຈະມີສິດຊີ້ນໍາການຈັດຕັ້ງປະຕິບັດໂຄງການຍ່ອຍຈົນກວ່າຈະສໍາເລັດ ແລະ ຈະມີສິດໃນການກວດກາເອກະສານໂຄງການ ແລະ ສິ່ງອໍານວຍຄວາມສະດວກຂອງໂຄງການຍ່ອຍໂດຍບໍ່ແຈ້ງລ່ວງໜ້າໄດ້ທຸກໆເວລາ.

2.25 ຈະລວມເຂົ້າໃນບົດລາຍງານສະພາບການຈັດຕັ້ງປະຕິບັດໂຄງການຍ່ອຍຢ່າງສະໝໍ່າສະເໝີຕໍ່ຜູ້ໃຫ້ທຶນ ແລະຄະນະກໍາມະການເຕັກນິກ.

2.26 ຈະຈັດການຝຶກອົບຮົມກ່ຽວກັບການຈັດຕັ້ງປະຕິບັດ, ຕິດຕາມກວດກາ, ລາຍງານແລະປະເມີນຜົນ, ຄຸ້ມຄອງແລະລາຍງານການເງິນ, ລະບຽບຈັດຊື້ຈັດຈ້າງ ແລະ ນະໂຍບາຍປົກປ້ອງສັງຄົມ ແລະ ສິ່ງແວດລ້ອມໃຫ້ແກ່ໂຄງການຍ່ອຍ.

2.27 ຈະໃຫ້ການຊ່ວຍເຫຼືອດ້ານເຕັກນິກແກ່ອົງການໂຄງການຍ່ອຍໃນການສ້າງເອກະ ສານ (ເຊັ່ນ: ຮ່າງແລະທົບທວນຕໍາແໜ່ງງານ/ໜ້າທີ່ຂອງພະນັກງານແລະທີ່ປຶກສາ, ໃຫ້ການຊ່ວຍເຫຼືອພາຂຽນບົດລາຍງານແລະອື່ນໆ) ຕາມທີ່ຜູ້ຮັບທຶນສະເໜີມາ.

2.28 ຮັກສາເອກກະສານຕົ້ນສະບັບທັງໝົດໄວ້ (ສັນຍາ, ໃບສັ່ງຊື້, ໃບສະເໜີລາຄາ, ໃບບິນ, ໃບຮັບເງິນແລະເອກກະສານອື່ນໆ) ເພື່ອຢັ້ງຢືນການໃຊ້ຈ່າຍຂອງໂຄງການຍ່ອຍ ຮອດວັນທີ 30/6/2023 ຫຼືວັນທີທີ່ທະນາຄານໂລກຈະກໍານົດໃຫ້ຕື່ມ.

***ມາດຕາ 3: ການສະໜອງທຶນ ແລະ ການເບີກຈ່າຍ***

3.1. ອີງຕາມຄູ່ມືຈັດຕັ້ງປະຕິບັດ, ອົງການສະໜອງທຶນ ຈະຈ່າຍເປັນເງິນໂອນໃຫ້ໂດຍກົງ ສໍາລັບຄ່າໃຊ້ຈ່າຍທີ່ເກີນມູນຄ່າຫຼາຍກວ່າ 10,000ໂດລາ.

3.2. ສໍາລັບທຶນຈໍານວນໜຶ່ງທີ່ບໍ່ໄດ້ຈ່າຍໂດຍກົງນັ້ນ, ອົງການຈັດຕັ້ງປະຕິບັດ ຈະສົ່ງ "ໃບສະເໜີຂໍເບີກເງິນ" ເປັນລາຍລັກອັກສອນ, ຕາມຂັ້ນຕອນທີ່ກໍານົດໄວ້ໃນຄູ່ມືຈັດຕັ້ງປະຕິບັດໂຄງການຍ່ອຍ. ຫຼັງຈາກນັ້ນ, ອົງການສະໜອງທຶນ ຈະຈ່າຍເງິນໃຫ້ຕາມ ແຜນວຽກແລະງົບປີ ແລະຫຼັງຈາກມີການສະຫຼຸບເງິນທີ່ໄດ້ຂໍມາກ່ອນນັ້ນ.

3.3. ຫ້າມບໍ່ໃຫ້ຂໍຖອນແລະເບີກຈ່າຍເງິນ ກ່ອນມື້ສັນຍາມີຜົນສັກສິດ.

3.4. ຖ້າອົງການສະໜອງທຶນ ຫາກຮູ້ວ່າໃນເວລາໃດໜຶ່ງວ່າເງິນທີ່ຄ້າງໃນບັນຊີຂອງໂຄງການຍ່ອຍ ຈະບໍ່ໄດ້ເອົາໄປໃຊ້ຈ່າຍໃນວຽກໃດໜຶ່ງຕື່ມໃນຕໍ່ໜ້າ, ເມື່ອໄດ້ຮັບການແຈ້ງການຈາກອົງການສະໜອງທຶນ, ອົງການຈັດຕັ້ງປະຕິບັດ ຈະສົ່ງເງິນຈໍານວນດັ່ງກ່າວຄືນທັນທີ ໃຫ້ອົງການສະໜອງທຶນ.

3.5. ໃນກໍລະນີທີ່ຢຸດຕິຫຼືຍົກເລີກໂຄງການຍ່ອຍ, ອົງການຈັດຕັ້ງປະຕິບັດ ຈະບໍ່ຖອນເງິນອອກ ຫຼື ຈ່າຍເງິນອອກຈາກບັນຊີຂອງໂຄງການຍ່ອຍໄດ້ອີກ ຖ້າບໍ່ໄດ້ມີການອະນຸຍາດຈາກອົງການສະໜອງທຶນສາກ່ອນ.

3.6. ຖ້າອົງການສະໜອງທຶນ ຫາກເຫັນວ່າທຶນຮອນຈໍານວນໃດໜຶ່ງຂອງໂຄງການຍ່ອຍໄດ້ຈ່າຍໄປໂດຍ ບໍ່ສອດຄ່ອງກັບສັນຍາສະບັບນີ້, ອົງການຈັດຕັ້ງປະຕິບັດ ຈະໄດ້ໃຊ້ເງິນຈໍານວນດັ່ງກ່າວຄືນທັນທີໃຫ້ອົງການສະໜອງທຶນ ພາຍຫຼັງໄດ້ຮັບການແຈ້ງການຈາກ ອົງການສະໜອງທຶນ.

*ມາດຕາ 4: ຕາຕະລາງຈ່າຍເງິນທີ່ຄາດໄວ້*

4.1. ສໍາລັບທຶນຈໍານວນໜຶ່ງທີ່ບໍ່ໄດ້ຈ່າຍໂດຍກົງນັ້ນ, ຈະຈ່າຍໃຫ້ໂຄງການຍ່ອຍເປັນໄຕມາດ ຕາມ ແຜນວຽກແລະງົບປີ ຄືໄດ້ກໍານົດໃນຄູ່ມືຈັດຕັ້ງປະຕິບັດໂຄງການຍ່ອຍ. ການຈ່າຍທຶນໃຫ້ເປັນໄຕມາດ ເພື່ອເປັນທຶນແກ່ກິດຈະກໍາທີ່ວາງໄວ້ສໍາລັບງວດນັ້ນ. ການໂອນເງິນງວດທໍາອິດ ຈະລວມເອົາຄ່າຈັດຕັ້ງປະຕິບັດກິດຈະກໍາຂອງໂຄງການຍ່ອຍ ໃນ 3 ເດືອນທໍາອິດ.

4.2. ການໂອນໃນງວດຕໍ່ໄປ ຈະເຮັດຕາມການສະເໜີຂອງອົງການຈັດຕັ້ງປະຕິບັດໂຄງການຍ່ອຍ ບໍ່ເກີນມື້ທີ 5 ຂອງເດືອນສຸດທ້າຍຂອງໄຕມາດ, ພ້ອມທັງບົດລາຍງານກ່ຽວກັບການຈ່າຍເງິນແບບສະສົມມາແລະສະຫຼຸບການເບີກຈ່າຍຈາກອົງການສະໜອງທຶນ. ເມື່ອບົດລາຍງານການເງິນແບບສະສົມມາ ເປັນທີ່ຮັບໄດ້, ອົງການສະໜອງທຶນ ຈະໂອນເງິນງວດທີ່ຂໍມານັ້ນໃຫ້.

4.3. ການຈ່າຍເທື່ອສຸດທ້າຍ ຈະແມ່ນພາຍຫຼັງທີ່ໄດ້ສໍາເລັດທຸກເງື່ອນໄຂທີ່ໂຄງການຍ່ອຍຕ້ອງເຮັດ ຄືໄດ້ກໍານົດໃນຄູ່ມືຈັດຕັ້ງປະຕິບັດໂຄງການຍ່ອຍ, ຖ້າບໍ່ມີການຕົກລົງຢ່າງອື່ນກັບອົງການສະໜອງທຶນ.

*ມາດຕາ 5: ການຢຸດຕິແລະຍົກເລີກສັນຍາ*

5.1. ສິດຂອງອົງການຈັດຕັ້ງປະຕິບັດໂຄງການຍ່ອຍ ທີ່ຈະຖອນແລະນໍາໃຊ້ທຶນຂອງໂຄງການຍ່ອຍ ອາດຖືກສັ່ງຢຸດການໃຊ້ຈ່າຍແລະຍົກເລີກ, ຖ້າອົງການສະໜອງທຶນ ຫາກພົບເຫັນເຫດການໃດໜຶ່ງດັ່ງຕໍ່ໄປນີ້ ເກີດຂຶ້ນ:

i) ອົງການຈັດຕັ້ງປະຕິບັດໂຄງການຍ່ອຍ ບໍ່ສາມາດປະຕິບັດໄດ້ຕາມພັນທະທີ່ ລະບຸໄວ້ໃນສັນຍາສະບັບນີ້;

ii) ຖ້າ, ໃນການຕີລາຄາຂອງ ອົງການສະໜອງທຶນ, ຫາກເຫັນວ່າຄຸນນະພາບໃນການຈັດຕັ້ງ ປະຕິບັດໂຄງການຍັງບໍ່ດີພໍ ຊຶ່ງແມ່ນຈຸດປະສົງແລະຜົນທີ່ຄາດວ່າຈະໄດ້ຮັບ, ຄືໄດ້ກໍານົດໃນບົດສະເໜີໂຄງການຍ່ອຍ ບໍ່ສາມາດບັນລຸໃນຄຸນນະພາບແລະກອບເວລາທີ່ໄດ້ຕົກລົງນໍາກັນ;

iii) ຕາມການສະເໜີຂອງອົງການຈັດຕັ້ງປະຕິບັດ ກ່ຽວກັບເຫດການພິເສດທີ່ບໍ່ໄດ້ ຄາດຄະເນ ມາກ່ອນໃນເອກກະສານໂຄງການ, ອົງການສະໜອງທຶນ ຈະເຫັນດີນໍາການຍົກເລີກກິດຈະກໍາຂອງໂຄງການຍ່ອຍ. ກ່ອນຍົກເລີກ, ອົງການສະໜອງທຶນ ຈະຂໍຄໍາເຫັນທາງດ້ານນະໂຍບາຍຈາກຄະນະກໍາມະການເຕັກນິກຂອງ ກປສ

ເພື່ອຊອກຫາກົນໄກການຈັດຕັ້ງປະຕິບັດແບບໃໝ່. ຖ້າຫາກມີເຫດຜົນຍົກເລີກສັນຍາ, ອົງການສະໜອງທຶນ ຈະສ້າງເງື່ອນໄຂທາງດ້ານການເງິນແລະກົນໄກ ເພື່ອຍົກເລີກ.

iv) ຖ້າ, ໃນການຕີລາຄາຂອງອົງການສະໜອງທຶນ, ອົງການຈັດຕັ້ງປະຕິບັດໂຄງການຍ່ອຍ ໄດ້ໂຈະການຈັດຕັ້ງປະຕິບັດໂຄງການຍ່ອຍ ໃນໄລຍະເວລາໃດໜຶ່ງ ຈົນເຮັດໃຫ້ຈຸດປະສົງຂອງໂຄງການຍ່ອຍ ມີຄວາມສ່ຽງທີ່ຈະປະຕິບັດໄດ້;

v) ຖ້າພາລະບົດບາດຂອງອົງການຈັດຕັ້ງປະຕິບັດ ໄດ້ຖືກດັດແກ້, ໂຈະ, ປ່ຽນແປງ, ອຸທອນຫຼືປະຕິເສດ ຈົນເຮັດໃຫ້ມີຜົນເສຍຫາຍທາງດ້ານກາຍະພາບແລະແຕະຕ້ອງຄວາມສາມາດຂອງອົງການຈັດຕັ້ງປະຕິບັດ ເພື່ອຈັດຕັ້ງໂຄງການຍ່ອຍດັ່ງກ່າວ;

vi) ຍ້ອນມີເຫດການໃດໜຶ່ງເກີດຂຶ້ນຫຼັງເຊັນສັນຍາ, ສະພາບການພິເສດໄດ້ເກີດຂຶ້ນ ຊຶ່ງອາດເຮັດໃຫ້ອົງການຈັດຕັ້ງປະຕິບັດ ບໍ່ສາມາດຈັດຕັ້ງປະຕິບັດໂຄງການຍ່ອຍໄດ້; ແລະ

vii) ທະນາຄານໂລກ ໄດ້ຢຸດຕິ ແລະ ຍົກເລີກສິດ ຂອງ ສປປລາວ ທີ່ຈະຖອນເອົາທຶນທີ່ໃຫ້ໂຄງການນີ້.

5. 2 ໃນກໍລະນີທີ່ອົງການສະໜອງທຶນແຈ້ງໃຫ້ອົງການຈັດຕັ້ງປະຕິບັດ ວ່າຈະມີການຍົກ ເລີກສັນຍາ, ອົງການສະໜອງທຶນ ອາດສະເໜີໃຫ້ອົງການຈັດຕັ້ງປະຕິບັດໂຄງການຍ່ອຍ ແກ້ສາເຫດຂອງການຍົກເລີກດັ່ງກ່າວ ພາຍໃນໄລຍະສັ້ນໆໜຶ່ງເພື່ອຫຼີກລ້ຽງການຢຸດຕິແລະຍົກເລີກ. ຢ່າງໃດກໍດີ, ເຖິງແມ່ນວ່າອົງການສະໜອງທຶນ ເຫັນວ່າສາເຫດທີ່ຈະພາໃຫ້ຍົກເລີກສັນຍານັ້ນ ບໍ່ຢູ່ໃນຄວາມຮັບຜິດຊອບຂອງອົງການຈັດຕັ້ງປະຕິບັດກໍດີ, ອົງການສະໜອງທຶນ ຍັງມີສິດທີ່ຈະຍົກເລີກສັນຍານີ້ຢູ່ ຫຼັງຈາກໄດ້ແຈ້ງໃຫ້ອົງການຈັດຕັ້ງປະຕິບັດໂຄງການຍ່ອຍຊາບຢ່າງເປັນທາງການ.

### *ມາດຕາ 6: ບັນດາເອກະສານຂັດຕິດໃສ່ສັນຍາສະບັບນີ້*

6.1. ບັນດາເອກະສານຕໍ່ໄປນີ້ ແມ່ນໄດ້ຂັດຕິດໃສ່ສັນຍາສະບັບນີ້ ແລະ ດັ່ງນັ້ນ ຈະເປັນ ພາກສ່ວນໜຶ່ງທີ່ສົມບູນຂອງສັນຍາສະບັບນີ້:

- i) ຈົດໝາຍຂໍການຊ່ວຍເຫຼືອຂອງອົງການຈັດຕັ້ງປະຕິບັດ ນຳອົງການສະໜອງທຶນ (ຈົດໝາຍຊີ້ແຈ້ງບົດສະເໜີໂຄງການ);
- ii) ບົດສະເໜີໂຄງການຍ່ອຍ;
- iii) ຄູ່ມືຈັດຕັ້ງປະຕິບັດໂຄງການ;
- iv) ກອບການຄຸ້ມຄອງສິ່ງແວດລ້ອມແລະສັງຄົມແລະກອບການເຂົ້າຮ່ວມຂອງຊຸມຊົນ; ແລະ
- v) ນະໂຍບາຍການນຳໃຊ້ລິດຂອງ ກປສ/ໂຄງການ.

6.1. ເອກະສານທີ່ຂັດຕິດ ແລະ ເອົາເປັນເອກະສານອ້າງອີງ ສຳລັບສັນຍາສະບັບນີ້ ເປັນຂໍ້ຜູກພັນທາງດ້ານກົດໝາຍ ແລະ ການທີ່ບໍ່ນັບຖືສັນຍາສະບັບນີ້ ຈະເປັນພື້ນຖານໃຫ້ອົງການສະໜອງທຶນ ຍົກເລີກສັນຍາໄດ້.

***ມາດຕາ 7: ການດັດແກ້ສັນຍາ***

7.1. ການດັດແກ້ເນື້ອໃນຂອງສັນຍາສະບັບນີ້ ແມ່ນສາມາດເຮັດໄດ້ດ້ວຍການຕົກລົງເຫັນດີຈາກ ທຸກຝ່າຍທີ່ກ່ຽວຂ້ອງ, ໂດຍສະເພາະ ແມ່ນຜູ້ລົງນາມໃສ່ສັນຍາສະບັບນີ້.

***ມາດຕາ 8: ສິ່ງຕ້ອງຫ້າມຕ່າງໆ***

8.1. ໃນການດຳເນີນວຽກກໍ່ສ້າງ, ອົງການຈັດຕັ້ງປະຕິບັດ ຈະບໍ່ນຳໃຊ້ກົນຈັກໜັກ ທີ່ບໍ່ໄດ້ ລະບຸໄວ້ ໃນເອກກະສານໂຄງການທີ່ໄດ້ຂັດຕິດມາພ້ອມນີ້.

8.2. ຫ້າມບໍ່ໃຫ້ອົງການຈັດຕັ້ງປະຕິບັດ ສະເໜີໃຫ້ຜູ້ໄດ້ຜົນປະໂຫຍດນຳມາເຮັດວຽກ ໂດຍບໍ່ຈ່າຍຄ່າໃດໆໃຫ້ສຳລັບວຽກຕ່າງໆທີ່ກຳນົດໃນສັນຍາສະບັບນີ້. ອົງການສະໜອງທຶນ ມີສິດເຕັມສ່ວນທີ່ຈະຢຸດຕິການເບີກຈ່າຍທັນທີແລະຢຸດຕິຫຼືຍົກເລີກສັນຍາສະບັບນີ້.

8.3. ອົງການຈັດຕັ້ງປະຕິບັດ ແມ່ນບໍ່ອະນຸຍາດໃຫ້ເຮັດສັນຍາຍ່ອຍຕໍ່ກັບພາກສ່ວນອື່ນຍົກເວັ້ນ ແຕ່ໄດ້ກຳນົດໃນບົດສະເໜີໂຄງການຍ່ອຍ. ແຕ່ຢ່າງໃດກໍດີ, ວຽກບາງສ່ວນ ສາມາດເຮັດ ສັນ ຍາຍ່ອຍຕໍ່ໄດ້, ພາຍຫຼັງທີ່ໄດ້ສົ່ງເຫດຜົນລະອຽດ ເພື່ອເຮັດສັນຍາຍ່ອຍ ແລະ ໄດ້ຮັບ ຈົດໝາຍແຈ້ງຢ່າງເປັນທາງການຈາກອົງການສະໜອງທຶນ. ໃນກໍລະນີ, ທີ່ອົງການຈັດຕັ້ງປະຕິ ບັດ ໄດ້ເຮັດສັນຍາຍ່ອຍກ່ອນ ໄດ້ຮັບອະນຸມັດເປັນລາຍລັກອັກສອນ, ອົງການສະໜອງທຶນ ມີສິດຢ່າງເຕັມສ່ວນໃນການຍົກ ເລີກສັນຍາ ແລະ ຈະບໍ່ຈ່າຍເງິນທີ່ເປັນຄ່າກິດຈະການຕ່າງໆໃຫ້ອົງການຈັດຕັ້ງ ປະຕິບັດໂຄງການຍ່ອຍ.

***ມາດຕາ 9: ລາຍເຊັນທີ່ໄດ້ຮັບອະນຸຍາດ***

9.1. ທຸກໆການສະເໜີ ຫຼື ການລາຍງານໂດຍກົງຫາຝ່າຍໃດໜຶ່ງຂອງສັນຍາສະບັບນີ້ ຕ້ອງມີລາຍເຊັນຂອງຜູ້ຕາງໜ້າຂອງຝ່າຍນັ້ນ.

***ມາດຕາ 10: ໄລຍະອາຍຸຂອງສັນຍາ***

10.1. ອົງການຈັດຕັ້ງປະຕິບັດ ຕັດສິນໃຈທີ່ຈະຈັດຕັ້ງໂຄງການໃຫ້ສຳເລັດ ພາຍໃນ ວັນທີ່ 01 ກໍລະກົດ 2015 – 31 ມິຖຸນາ 2020, ຊຶ່ງຈະເລີ້ມນັບແຕ່ມື້ລົງນາມສັນຍາສະບັບນີ້. ໃນກໍລະນີ ທີ່ບໍ່ປະຕິບັດ ຕາມເງື່ອນໄຂນີ້ໄດ້, ອົງການສະໜອງທຶນ ມີສິດທີ່ຈະຍົກເລີກສັນຍາ ຫຼື ຕັດສິນໃຈຕໍ່ເວລາໃຫ້ຕື່ມ ເພື່ອໃຫ້ຈັດຕັ້ງໂຄງການຍ່ອຍສຳເລັດ ແລະ ແຈ້ງໃຫ້ ອົງການຈັດຕັ້ງປະຕິບັດໂຄງການຍ່ອຍຊາບ.

***ມາດຕາ 11: ສິ່ງເພີ້ມເຕີມ ແລະ ການທວດຄືນ***

11.1. ໃນກໍລະນີ ທີ່ລາຄາເພີ້ມຂຶ້ນຫຼາຍໂດຍບໍ່ຄິດໄວ້ ສຳລັບບາງອັນໃນແຜນວຽກແລະງົບປີ, ອົງການຈັດຕັ້ງປະຕິບັດໂຄງການຍ່ອຍ ຕ້ອງໄດ້ຮັບຄຳເຫັນດີ ຈາກອົງການສະໜອງທຶນກ່ອນ ສຳລັບຄ່າເພີ້ມແຕ່ລະປະເພດ, ຄືກັບອັນທີ່ໂຄງການສະເໜີມາ.

11.2. ອົງການຈັດຕັ້ງປະຕິບັດໂຄງການຍ່ອຍ ຈະບໍ່ຂໍເບີກເງິນນຳອົງການໃຫ້ທຶນ ສຳລັບວຽກ ທີ່ບໍ່ ທັນສຳເລັດ ຫຼື ມີຄວາມຜິດພາດ ທີ່ເກີດມາຈາກການອອກແບບ ຫຼື ມາດຕະຖານ ດ້ານເຕັກນິກ ໃນໄລຍະ ຫຼື ຫຼັງຈາກຈັດຕັ້ງປະຕິບັດໂຄງການຍ່ອຍ.

*ມາດຕາ 12: ການແກ້ໄຂຂໍ້ຂັດແຍ່ງ*

12.1. ທຸກໆຂໍ້ຂັດແຍ່ງຫຼືຜິດພາດ ທີ່ເກີດຂຶ້ນຫຼືຕິດພັນກັບການຕີຄວາມໝາຍເນື້ອໃນ ຫຼື ຈັດຕັ້ງປະຕິບັດສັນຍາສະບັບນີ້, ທີ່ບໍ່ສາມາດແກ້ໄຂໄດ້ແບບມິດຕະພາບ ໂດຍຝ່າຍ ກ່ຽວຂ້ອງ ແມ່ນຈະນໍາສະເໜີໃຫ້ດໍາເນີນຕາມຂະບວນການຍຸດຕິທໍາຕາມກົດໝາຍ ຂອງ ສປປລາວ.

***ມາດຕາ 13: ສັນຍາສະບັບນີ້ ຈະມີຜົນສັກສິດນັບແຕ່ມື້ທີ່ຝ່າຍກ່ຽວຂ້ອງລົງລາຍເຊັນ ແລະ ເງື່ອນໄຂສົມບູນ.***

ຮັບຮອງເອົາໃນ: ວັນທີ 21/06 /2016, ທີ່: ນະຄອນຫຼວງວຽງຈັນ

**ຜູ້ຕາງໜ້າອົງການສະໜອງທຶນ**

ຫ້ອງວ່າການລັດຖະບານ
ກອງທຶນ
ປົກປັກຮັກສາ
ສິ່ງແວດລ້ອມ

ຄໍາປະດິດ ຄໍາມູນເຮືອງ

**ຜູ້ຕາງໜ້າອົງການຈັດຕັ້ງປະຕິບັດໂຄງການຍ່ອຍ**

ກົມແຜນການ ແລະ ການຮ່ວມມື

ດຣ.ໄຊນະຄອນ ອິນທະວົງ

## ເອກະສານຄັດຕິດ 1 ຂອງສັນຍາໂຄງການຍ່ອຍ
## ເງື່ອນໄຂໃຫ້ສັນຍາມີຜົນສັກສິດ

- ເລກທີໂຄງການຍ່ອຍ: ***PICE-PAW005***
- ຊື່ໂຄງການຍ່ອຍ: ***ໂຄງການສ້າງຄວາມເຂັ້ມແຂງ ໃຫ້ ກົມແຜນການ ແລະ ການຮ່ວມມື, ກຊສ ໃນການວາງແຜນ ແລະ ປະສານງານ ໃນຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ***
- ທີ່ຢູ່ຂອງໂຄງການຍ່ອຍ: ***ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກຳແພງນະຄອນວຽງຈັນ.***
- ມູນຄ່າໂຄງການຍ່ອຍ: ***4,033,800,000 ກີບ ທຽບເທົ່າ 498,000 ໂດລາສະຫະລັດ (ສີ່ຕື້ ສາມສິບສາມລ້ານ ແປດແສນ ກີບ ຖ້ວນ) ທຽບເທົ່າ 498,000.00 ໂດລາສະຫະລັດ (ສີ່ແສນ ເກົ້າສິບແປດພັນ ໂດລາສະຫະລັດ ຖ້ວນ), ລວມເງິນແຮ 10%, ແຕ່ບໍ່ລວມເງິນປະກອບສ່ວນຂອງຄູ່ຮ່ວມງານ.*** ອັດຕາແລກປ່ຽນ 8,100 ກີບ ຕໍ່ 1 ໂດລາສະຫະລັດ.

**ເງື່ອນໄຂໃຫ້ສັນຍາມີຜົນສັກສິດມີດັ່ງຕໍ່ໄປນີ້:**

i) ອົງການຈັດຕັ້ງປະຕິບັດໂຄງການຍ່ອຍໄດ້ສົ່ງແຜນງວດ (ເບິ່ງຂໍ້ 7.2 ຂອງແບບຟອມ ຂໍທຶນ), ແຜນງົບປະມານ (ເບິ່ງຂໍ້ 7.1 ຂອງແບບຟອມຂໍທຶນ), ແຜນຈັດຊື້ຈັດຈ້າງ (ເບິ່ງຂໍ້ 9 ຂອງແບບຟອມຂໍທຶນ), ແລະແຜນຕິດຕາມກວດກາ (ເບິ່ງຂໍ້ 10 ຂອງແບບຟອມຂໍທຶນ), ຕາມທີ່ອົງການສະໜອງທຶນພໍໃຈ.

ii) ການແຈ້ງການຂອງອົງການຈັດຕັ້ງປະຕິບັດໂຄງການຍ່ອຍ ກ່ຽວກັບການແຕ່ງຕັ້ງ ພະນັກງານ ມາເຮັດວຽກໂຄງການຍ່ອຍ ແລະ ໜ້າທີ່ຫຼືຕຳແໜ່ງງານ ຂອງແຕ່ລະຄົນທີ່ແຕ່ງຕັ້ງມານັ້ນ. ເບິ່ງຂໍ້ 12 ຂອງແບບຟອມຂໍທຶນໃນການແຍກພະນັກງານທີ່ແຕ່ງຕັ້ງມາເຮັດວຽກ ແລະ ພະນັກງານທີ່ໂຄງການຍ່ອຍຈັດຈ້າງເຂົ້າມາ. ກປສ ຍັງຈະໄດ້ໃຫ້ຄວາມເຫັນກ່ຽວກັບພະນັກງານທີ່ແຕ່ງຕັ້ງເຂົ້າມານັ້ນແລະໜ້າທີ່ເຂົາເຈົ້າ.

iii) ການແຈ້ງການຂອງອົງການຈັດຕັ້ງປະຕິບັດໂຄງການຍ່ອຍ ກ່ຽວກັບທຶນສົມທົບ ໂດຍນຳໃຊ້ແບບຟອມ ໃນຂໍ້ 13 ຂອງແບບຟອມຂໍທຶນໃຫ້ໂຄງການຍ່ອຍ.